ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ກອງປະຊຸມປຶກສາຫາລືແລກປ່ຽນບົດຮຽນລະຫວ່າງ ຄະນະບໍລິຫານງານສູນກາງ ສະຫະພັນກຳມະບານລາວ ແລະ ສະຫະພັນກຳມະບານ ທະນາຄານແຫ່ງ ສປປ ລາວ



ໃນວັນທີ 11 ກໍລະກົດ 2022 ຜ່ານມານີ້, ສະຫະພັນກຳມະບານ ທະນາຄານແຫ່ງ ສປປ ລາວ ໄດ້ຈັດກອງປະຊຸມປຶກສາຫາລືແລກປ່ຽນບົດຮຽນລະຫວ່າງ ຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ ແລະ ສະຫະພັນກຳມະບານ ທະນາຄານແຫ່ງ ສປປ ລາວ ຂຶ້ນຢູ່ທີ່ຫ້ອງປະຊຸມຊັ້ນ IV ທຫລ. ໃຫ້ກຽດເຂົ້າຮ່ວມເປັນປະທານໂດຍ ສະຫາຍ ນ. ອາລີ ວົງໜໍ່ບຸນທຳ ກຳມະການສູນກາງພັກ, ປະທານຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ ພ້ອມດ້ວຍຄະນະ ແລະ ທ່ານ ນາງ ຂັນແກ້ວ ຫລ້າມະນີເງົາ ຫົວໜ້າກົມ ນະໂຍບາຍເງິນຕາ, ປະທານສະຫະພັນກຳມະບານ ທຫລ, ຄະນະບໍລິຫານງານກຳມະບານ ທຫລ ເຂົ້າຮ່ວມ.

ຈຸດປະສົງຂອງກອງປະຊຸມໃນຄັ້ງນີ້, ເພື່ອເປັນການປຶກສາຫາລື ແລະ ແລກປ່ຽນບົດຮຽນລະຫວ່າງຂອງທັງສອງພາກສ່ວນໃຫ້ມີຄວາມກົມກຽວສະໜິດແໜ້ນຂຶ້ນກວ່າເກົ່າ. ນະໂອກາດນີ້, ທັງສອງພາກສ່ວນໄດ້ແລກປ່ຽນການເຄື່ອນໄຫວຂອງວຽກງານຂອງສະຫະພັນກຳມະບານ ໃນໄລຍະ 6 ເດືອນຜ່ານມາຂອງຕົນຕໍ່ກັນ ແລະ ກັນ. ໂດຍສະເພາະການປະກອບສ່ວນໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຕໍ່ການແກ້ໄຂບັນຫາຫຍຸ້ງຍາກດ້ານເສດຖະກິດ ເປັນຕົ້ນແມ່ນບັນຫາອັດຕາແລກປ່ຽນ.




ເຮັດໃຫ້ກອງປະຊຸມດັ່ງກ່າວດຳເນີນໄປດ້ວຍບັນຍາກາດຟົດຟື້ນ ແລະ ປະສົບຜົນສຳເລັດຕາມລະດັບຄາດໝາຍຢ່າງອັນຈົບງາມ.

*ຂ່າວ-ພາບ: ທ ສົມພິດ ທຳມະວົງ*

*ຢູ່ເມືອງລາວ ໃຊ້ແຕ່ເງິນກີບ*